ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 549 /ລບ

ນະຄອນຫຼວງວຽງຈັນ, ວັນທີ 26 / 08 / 25

# ດຳລັດ

# ວ່າດ້ວຍຕາປະທັບ

- ອີງຕາມ ມາດຕາ 5 ຂໍ້ທີ 3 ຂອງກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມາດຕາ 2, ມາດຕາ 4, ມາດຕາ 15, ມາດຕາ 32, ມາດຕາ 49 ແລະ ມາດຕາ 64 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 75/ສພຊ, ລົງວັນທີ 20 ມີນາ 2025.
- ອີງຕາມ ມາດຕາ 22 ຂອງກົດໝາຍ ວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ໜັງສືສະເໜີຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 387/ຄຈສພ, ລົງວັນທີ 13 ສິງຫາ 2025.

## ລັດຖະບານ ອອກດຳລັດ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາ ການນຳໃຊ້ຕາປະທັບ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມຖືກຕ້ອງ, ສະດວກ, ວ່ອງໄວ, ໂປ່ງໃສ ແນໃສ່ເຮັດໃຫ້ການນຳໃຊ້ຕາປະທັບ ມີຄວາມເປັນເອກະພາບສູງ, ຮັບປະກັນຄວາມຖືກຕ້ອງ ແລະ ປອດໄພ.

**ມາດຕາ 2 ຕາປະທັບ**

ຕາປະທັບ ແມ່ນເຄື່ອງມືພິເສດ ຂອງອົງການຈັດຕັ້ງໃດໜຶ່ງ ເມື່ອຈ້ຳລົງໃນເອກະສານແລ້ວ ສະແດງເຖິງອຳນາດ, ສິດ ແລະ ໜ້າທີ່ ຂອງອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງເສດຖະກິດ, ອົງການຈັດຕັ້ງສາສະໜາ ແລະ ອົງການຈັດຕັ້ງສາກົນ ທີ່ປະຕິບັດໜ້າທີ່ ຢູ່ ສປປ ລາວ ທີ່ກົດໝາຍກຳນົດ ແລະ ຢັ້ງຢືນຄຸນຄ່າທາງດ້ານກົດໝາຍ ຂອງເອກະສານ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຕາປະທັບປຽກ** ໝາຍເຖິງ ຕາປະທັບ ທີ່ໃຊ້ນ້ຳມຶກ ເພື່ອຈ້ຳລົງໃນເອກະສານ ເມື່ອຈ້ຳແລ້ວ ຈະເຫັນຂໍ້ມູນ ແລະ ເນື້ອໃນ ຂອງຕາປະທັບ;

2. **ຕາປະທັບແຫ້ງ ຫຼື ໂນນ** ໝາຍເຖິງ ຕາປະທັບ ທີ່ບໍ່ນຳໃຊ້ນ້ຳມຶກ ເພື່ອຈ້ຳ ຫຼັງຈາກຈ້ຳລົງເອກະສານແລ້ວ ຂໍ້ມູນ ແລະ ເນື້ອໃນ ຂອງຕາປະທັບຈະໂນນອອກມາໃຫ້ເຫັນ;

3. **ຕາປະທັບນ້ອຍ** ໝາຍເຖິງ ຕາປະທັບປຽກ ຫຼື ຕາປະທັບແຫ້ງ ທີ່ມີເນື້ອໃນຄືກັນກັບຕາປະທັບໜ່ວຍເດີມ ແຕ່ມີຂະໜາດນ້ອຍກວ່າ;

4. **ອົງການຈັດຕັ້ງລັດ** ໝາຍເຖິງ ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ, ສະພາປະຊາຊົນ ແລະ ອົງການປົກຄອງທ້ອງຖິ່ນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ຂັ້ນຕ່າງໆ, ສະຖານທູດ ແລະ ສະຖານກົງສຸນ ປະຈຳຢູ່ຕ່າງປະເທດ;

5. **ອົງການຈັດຕັ້ງເສດຖະກິດ** ໝາຍເຖິງ ວິສາຫະກິດຂອງລັດ, ວິສາຫະກິດສ່ວນບຸກຄົນ ຫຼື ວິສາຫະກິດປະສົມ ທີ່ມີທຶນຂອງລັດ ສິບຫ້າສ່ວນຮ້ອຍຂຶ້ນໄປ, ກຸ່ມທຸລະກິດ, ສະຫະພັນທຸລະກິດ, ສະມາຄົມທຸລະກິດ, ສະມາຄົມຊາວຄ້າຂາຍ ແລະ ສະຫະກອນ;

6. **ອົງການຈັດຕັ້ງສັງຄົມ** ໝາຍເຖິງ ສະຫະສະມາຄົມ, ສະຫະພັນ, ສະໂມສອນ, ສະມາຄົມ ແລະ ມູນນິທິ;

7. **ອົງການຈັດຕັ້ງສາສະໜາ** ໝາຍເຖິງ ກຸ່ມ ຫຼື ອົງການ ທີ່ຖືເອົາຄວາມເຊື່ອ ແລະ ຄຳສອນຂອງສາສະໜາເປັນຫຼັກ ແລະ ຈັດລະບົບພາຍໃນອົງກອນ ເພື່ອເຮັດໃຫ້ຄົນທີ່ເຊື່ອຖື ສາມາດປະຕິບັດໄດ້ຢ່າງຕໍ່ເນື່ອງ ແລະ ມີຄວາມສຳພັນໃນຮູບແບບອົງການ ເຊັ່ນ: ອົງການພຸດທະສາສະໜາສຳພັນລາວ, ອົງການສາສະໜາຄຣິດຕຽນ ແລະ ອົງການຈັດຕັ້ງສາສະໜາອື່ນໆ;

8. **ການຄວັດຕາປະທັບ** ໝາຍເຖິງ ການຜະລິດຕາປະທັບ ຕາມຮູບແບບທີ່ກຳນົດໃນດຳລັດສະບັບນີ້ ທີ່ພາກສ່ວນຕ່າງໆ ໄດ້ນຳສະເໜີຂໍອະນຸມັດ;

9. **ການຂຶ້ນທະບຽນ** ໝາຍເຖິງ ການບັນທຶກເກັບກຳຂໍ້ມູນ ກ່ຽວກັບຮູບແບບ, ຂະໜາດ ແລະ ເນື້ອໃນຕາປະທັບ.

**ມາດຕາ 4 ຫຼັກການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ**

ການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;

2. ສອດຄ່ອງກັບໜ້າທີ່ການເມືອງ, ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການ ຫຼື ການຈັດຕັ້ງນັ້ນ;

3. ລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;

4. ເປີດເຜີຍ, ໂປ່ງໃສ, ຍຸຕິທຳ ແລະ ກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງເສດຖະກິດ, ອົງການຈັດຕັ້ງສາສະໜາ, ສະຖານທູດ, ກົງສຸນປະຈຳຢູ່ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ທີ່ປະຕິບັດໜ້າທີ່ ຢູ່ ສປປ ລາວ.

## ໝວດທີ 2
## ຮູບແບບ, ສີນ້ຳມຶກ, ຂະໜາດ ແລະ ເນື້ອໃນຕາປະທັບ

**ມາດຕາ 6 ຮູບແບບຕາປະທັບ**

ຕາປະທັບ ປະກອບມີ ສອງ ຮູບແບບ ດັ່ງນີ້:

1. ຕາມົນ ແມ່ນຕາປະທັບ ຂອງອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງສາສະໜາ;
2. ຕາແປດລ່ຽມມົນທົນ ແມ່ນຕາປະທັບຂອງອົງການຈັດຕັ້ງເສດຖະກິດ.

**ມາດຕາ 7 ສີນ້ຳມຶກ ຂອງຕາປະທັບ**

ນ້ຳມຶກຂອງຕາປະທັບ ມີ ສອງສີ ດັ່ງນີ້:

1. ນ້ຳມຶກສີແດງ ນຳໃຊ້ສຳລັບອົງການຈັດຕັ້ງຂອງລັດ;
2. ນ້ຳມຶກສີຟ້າ ນຳໃຊ້ສຳລັບ ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງເສດຖະກິດ, ອົງການຈັດຕັ້ງສາສະໜາ ແລະ ອົງການຈັດຕັ້ງສາກົນ ທີ່ປະຈຳຢູ່ ສປປ ລາວ.

**ມາດຕາ 8 (ປັບປຸງ) ຂະໜາດ ແລະ ເນື້ອໃນຕາປະທັບ ຂອງອົງການຈັດຕັ້ງລັດ**

ຂະໜາດ ແລະ ເນື້ອໃນຕາປະທັບ ຂອງອົງການຈັດຕັ້ງລັດ ມີດັ່ງນີ້:

1. ຕາປະທັບ ຂອງປະທານປະເທດ ມີເສັ້ນຜ່າໃຈກາງ 4,2 ຊັງຕີແມັດ;
2. ຕາປະທັບ ຂອງປະທານສະພາແຫ່ງຊາດ ມີເສັ້ນຜ່າໃຈກາງ 4,1 ຊັງຕີແມັດ;
3. ຕາປະທັບ ຂອງນາຍົກລັດຖະມົນຕີ ມີເສັ້ນຜ່າໃຈກາງ 4,0 ຊັງຕີແມັດ.

ເນື້ອໃນຕາປະທັບທີ່ໄດ້ກຳນົດໄວ້ໃນຂໍ້ 1, 2 ແລະ 3 ຂອງມາດຕານີ້ ມີດັ່ງນີ້:

- ວົງນອກເບື້ອງເທິງ: ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຂັ້ນດ້ວຍຮູບດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ ຕຳແໜ່ງ;
- ໃຈກາງຕາປະທັບ: ເຄື່ອງໝາຍຊາດ.

4. ຕາປະທັບ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ທີ່ສັງກັດຢູ່ໃນໂຄງປະກອບກົງຈັກຂອງລັດຖະບານ, ມີເສັ້ນຜ່າໃຈກາງ 3,8 ຊັງຕີແມັດ ແລະ ມີເນື້ອໃນ ດັ່ງນີ້:

- ວົງນອກເບື້ອງເທິງ: ຊື່ ລັດຖະບານ ແຫ່ງ ສປປ ລາວ, ຂັ້ນດ້ວຍຮູບດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ ອົງການຕົນ;
- ໃຈກາງຕາປະທັບ: ເຄື່ອງໝາຍຊາດ.

5. ຕາປະທັບ ຂອງຄະນະປະຈຳສະພາແຫ່ງຊາດ, ກຳມະທິການຂອງສະພາແຫ່ງຊາດ, ຫ້ອງວ່າການປະທານປະເທດ, ຄະນະກຳມະການແຫ່ງຊາດ ທີ່ລັດຖະບານ ສ້າງຕັ້ງຂຶ້ນ, ຄະນະກຳມະການປົກຄອງຂັ້ນແຂວງ, ສຳນັກງານການທູດ, ກົງສຸນ ສປປ ລາວ ຢູ່ຕ່າງປະເທດ, ທະບວງ, ອົງການລັດທຽບເທົ່າທະບວງ ມີເສັ້ນຜ່າໃຈກາງ 3,8 ຊັງຕີແມັດ ແລະ ມີເນື້ອໃນ ດັ່ງນີ້:

- ວົງນອກເບື້ອງເທິງ: ຊື່ ອົງການ ຫຼື ອົງການທີ່ການຈັດຕັ້ງຂອງຕົນຂຶ້ນກັບ, ຂັ້ນດ້ວຍຮູບດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ ອົງການຕົນ;
- ໃຈກາງຕາປະທັບ: ເຄື່ອງໝາຍຊາດ.

ສຳລັບຕາປະທັບຂອງສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ສະພາປະຊາຊົນຂັ້ນແຂວງ, ສານປະຊາຊົນພາກ, ອົງການໄອຍະການປະຊາຊົນພາກ ແລະ ອົງການກວດສອບປະຈຳພາກ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

6. ຕາປະທັບ ຂອງຫ້ອງການ, ກົມ, ຫົວໜ່ວຍວິຊາການທຽບເທົ່າກົມ, ຫ້ອງການສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສານປະຊາຊົນຂັ້ນແຂວງ, ອົງການໄອຍະການປະຊາຊົນຂັ້ນແຂວງ, ສານປະຊາຊົນເຂດ, ອົງການໄອຍະການປະຊາຊົນເຂດ ແລະ ຄະນະກຳມະການປົກຄອງຂັ້ນເມືອງ ມີເສັ້ນຜ່າໃຈກາງ 3,6 ຊັງຕີແມັດ ແລະ ມີເນື້ອໃນ ດັ່ງນີ້:

- ວົງນອກເບື້ອງເທິງ: ຊື່ ອົງການທີ່ການຈັດຕັ້ງຂອງຕົນຂຶ້ນກັບ, ຂັ້ນດ້ວຍຮູບດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ ອົງການຕົນ;
- ໃຈກາງຕາປະທັບ: ເຄື່ອງໝາຍຊາດ.

7. ຕາປະທັບ ຂອງພະແນກການສາຍຕັ້ງຂອງກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ຢູ່ນະຄອນຫຼວງ, ແຂວງ ມີເສັ້ນຜ່າໃຈກາງ 3,5 ຊັງຕີແມັດ ແລະ ມີເນື້ອໃນ ດັ່ງນີ້:

- ວົງນອກເບື້ອງເທິງ: ຊື່ ກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ການຈັດຕັ້ງ ຂອງຕົນຂຶ້ນກັບ, ຂັ້ນດ້ວຍຮູບດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ ນະຄອນຫຼວງ, ແຂວງ;
- ໃຈກາງຕາປະທັບ: ຊື່ ອົງການຕົນ.

8. ຕາປະທັບ ຂອງຫ້ອງວ່າການນະຄອນຫຼວງ, ແຂວງ ແລະ ອົງການທຽບເທົ່າ, ຫ້ອງການຄຸ້ມຄອງຂະແໜງການ ແລະ ໂຮງຮຽນວິຊາຊີບ ທີ່ຂຶ້ນກັບນະຄອນຫຼວງ, ແຂວງ, ມີເສັ້ນຜ່າໃຈກາງ 3,5 ຊັງຕີແມັດ ແລະ ມີເນື້ອໃນ ດັ່ງນີ້:

- ວົງນອກເບື້ອງເທິງ: ຊື່ ນະຄອນຫຼວງ, ແຂວງ ທີ່ອົງການຈັດຕັ້ງຂອງຕົນຂຶ້ນກັບ;
- ວົງນອກເບື້ອງລຸ່ມ: ໃສ່ຮູບດາວ 5 ແຈ;
- ໃຈກາງຕາປະທັບ: ຊື່ ອົງການຕົນ.

9. ຕາປະທັບ ຂອງຫ້ອງວ່າການເມືອງ, ນະຄອນ, ຫ້ອງການຄຸ້ມຄອງຂະແໜງການ ຂອງເມືອງ, ນະຄອນ, ອົງການລັດທຽບເທົ່າ, ໂຮງຮຽນວິຊາຊີບ ທີ່ຂຶ້ນກັບເມືອງ, ນະຄອນ ແລະ ຄະນະກຳມະການປົກຄອງຂັ້ນຕາແສງ ມີເສັ້ນຜ່າໃຈກາງ 3,5 ຊັງຕີແມັດ ແລະ ມີເນື້ອໃນ ດັ່ງນີ້:

- ວົງນອກເບື້ອງເທິງ: ຊື່ ນະຄອນຫຼວງ, ແຂວງ ທີ່ອົງການຕົນຂຶ້ນກັບ, ຂັ້ນດ້ວຍຮູບດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ ເມືອງ, ນະຄອນ;
- ໃຈກາງຕາປະທັບ: ຊື່ ອົງການຕົນ.

10. ໂຄງການ ຫຼື ການຈັດຕັ້ງອື່ນ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງ ຕາມກົດໝາຍ ຖ້າມີຄວາມຈຳເປັນນຳໃຊ້ຕາປະທັບ ໃຫ້ນຳໃຊ້ຕາມົນ ທີ່ມີເສັ້ນຜ່າໃຈກາງ 3,5 ຊັງຕີແມັດ ແລະ ມີເນື້ອໃນ ດັ່ງນີ້:

- ວົງນອກເບື້ອງເທິງ: ຊື່ ອົງການຈັດຕັ້ງຂອງລັດ ທີ່ມີສິດອະນຸມັດສ້າງຕັ້ງ ຫຼື ຊື່ ອົງການຈັດຕັ້ງລັດທີ່ຄຸ້ມຄອງໂດຍກົງ, ຂັ້ນດ້ວຍຮູບດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ ນະຄອນຫຼວງ, ແຂວງ, ເມືອງ, ນະຄອນ ຫຼື ຕາແສງ ທີ່ສຳນັກງານ ຂອງອົງການຈັດຕັ້ງ ຫຼື ໂຄງການນັ້ນຕັ້ງຢູ່;
- ໃຈກາງຕາປະທັບ: ຊື່ ໂຄງການ ຫຼື ການຈັດຕັ້ງຂອງຕົນ.

ມາດຕາ 9 ຂະໜາດ ແລະ ເນື້ອໃນຕາປະທັບ ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

**1. ຂະໜາດ ແລະ ເນື້ອໃນຕາປະທັບ ຂອງກຳລັງປ້ອງກັນຊາດ ມີດັ່ງນີ້:**

1.1 ຕາປະທັບ ຂອງກົມໃຫຍ່, ຫ້ອງວ່າການກະຊວງ ແລະ ວິທະຍາຄານປ້ອງກັນຊາດ ທີ່ຂຶ້ນກັບກະຊວງປ້ອງກັນປະເທດ ມີເສັ້ນຜ່າໃຈກາງ 3,7 ຊັງຕີແມັດ;

1.2 ຕາປະທັບຂອງກອງບັນຊາການເຂດທະຫານ, ກອງພົນ, ກອງພົນໃຫຍ່ເອກະລາດ, ກອງບັນຊາການທະຫານຂັ້ນແຂວງ, ສານທະຫານຂັ້ນສູງ, ອົງການໄອຍະການທະຫານຂັ້ນສູງ, ວິທະຍາຄານ, ໂຮງຮຽນ, ໂຮງໝໍ, ກົມກອງທຽບເທົ່າ ທີ່ຂຶ້ນກັບກະຊວງໂດຍກົງ ແລະ ກົມ, ຫ້ອງການທີ່ຂຶ້ນກັບພາກສ່ວນຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.1 ຂອງມາດຕານີ້ ມີເສັ້ນຜ່າໃຈກາງ 3,6 ຊັງຕີແມັດ.

ຕາປະທັບ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.1 ແລະ 1.2 ຂອງມາດຕານີ້ ມີເນື້ອໃນ ດັ່ງນີ້:

- ວົງນອກເບື້ອງເທິງ: ກະຊວງປ້ອງກັນປະເທດ, ຂັ້ນດ້ວຍຮູບດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ ອົງການຈັດຕັ້ງ ຂອງຕົນ;
- ໃຈກາງຕາປະທັບ: ເຄື່ອງໝາຍກອງທັບ.

1.3 ຕາປະທັບ ຂອງຫ້ອງການ, ກອງພົນໃຫຍ່ ທີ່ຂຶ້ນກັບກອງພົນ, ໂຮງຮຽນ, ໂຮງໝໍ, ຫ້ອງເສນາທິການ, ຫ້ອງການເມືອງ, ຫ້ອງພະລາທິການ, ຫ້ອງເຕັກນິກ, ຫ້ອງການ ແລະ ບໍລິຫານ, ກົມກອງທຽບເທົ່າ ທີ່ຂຶ້ນກັບພາກສ່ວນຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.2 ຂອງມາດຕານີ້ ແລະ ຫ້ອງການເມືອງ, ຫ້ອງການບໍລິຫານ ທີ່ຂຶ້ນກັບພາກສ່ວນຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.1 ຂອງມາດຕານີ້ ມີເສັ້ນຜ່າໃຈກາງ 3,5 ຊັງຕີແມັດ.

1.4 ຕາປະທັບ ຂອງກອງບັນຊາການທະຫານເມືອງ, ນະຄອນ, ກອງພົນນ້ອຍ, ພະແນກ, ຂະແໜງການ, ໂຮງຮຽນ, ໂຮງໝໍ ແລະ ກົມກອງທຽບເທົ່າ ທີ່ຂຶ້ນກັບພາກສ່ວນຕ່າງໆ ຕາມທີ່ໄດ້ກຳນົດໄວ້ ໃນຂໍ້ 1.2 ແລະ ຂໍ້ 1.3 ຂອງມາດຕານີ້ ມີເສັ້ນຜ່າໃຈກາງ 3,5 ຊັງຕີແມັດ.

ຕາປະທັບ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.3 ແລະ 1.4 ຂອງມາດຕານີ້ ມີເນື້ອໃນ ດັ່ງນີ້:

- ວົງນອກເບື້ອງເທິງ: ຊື່ ຂອງອົງການຂັ້ນເທິງທັດອົງການ ຂອງຕົນຂຶ້ນກັບ, ຂັ້ນດ້ວຍຮູບດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ ອົງການຈັດຕັ້ງ ຂອງຕົນຂຶ້ນກັບ;
- ໃຈກາງຕາປະທັບ: ຊື່ ອົງການ ຂອງຕົນ.

**2 ຂະໜາດ ແລະ ເນື້ອໃນຕາປະທັບ ຂອງກຳລັງປ້ອງກັນຄວາມສະຫງົບ ມີດັ່ງນີ້:**

2.1 ຕາປະທັບ ຂອງຫ້ອງວ່າການກະຊວງ, ກົມໃຫຍ່ ທີ່ຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ ມີເສັ້ນຜ່າໃຈກາງ 3,7 ຊັງຕີແມັດ;

2.2 ຕາປະທັບ ຂອງກອງບັນຊາການ, ກົມ, ວິທະຍາຄານປ້ອງກັນຄວາມສະຫງົບ, ວິທະຍາຄານຕຳຫຼວດປະຊາຊົນ ມີເສັ້ນຜ່າໃຈກາງ 3,6 ຊັງຕີແມັດ;

2.3 ຕາປະທັບ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ, ໂຮງຮຽນຊັ້ນກາງ, ໂຮງໝໍ, ກົມນ້ອຍ ແລະ ຫ້ອງ ທີ່ຂຶ້ນກັບກົມໃຫຍ່ ມີເສັ້ນຜ່າໃຈກາງ 3,5 ຊັງຕີແມັດ.

ຕາປະທັບ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2.1, 2.2 ແລະ 2.3 ຂອງມາດຕານີ້ ມີເນື້ອໃນ ດັ່ງນີ້:

- ວົງນອກເບື້ອງເທິງ: ກະຊວງປ້ອງກັນຄວາມສະຫງົບ, ຂັ້ນດ້ວຍຮູບດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ ອົງການຈັດຕັ້ງ ຂອງຕົນ;
- ໃຈກາງຕາປະທັບ: ເຄື່ອງໝາຍປ້ອງກັນຄວາມສະຫງົບ.

2.4 ຕາປະທັບ ຂອງຫ້ອງການ, ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ ທີ່ຂຶ້ນກັບກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ, ກອງພັນ ແລະ ພະແນກ ທີ່ຂຶ້ນກັບພາກສ່ວນຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2.2 ຂອງມາດຕານີ້ ແລະ ຕາປະທັບດ່ານ ສຳລັບກວດຄົນເຂົ້າ-ອອກເມືອງ ມີເສັ້ນຜ່າໃຈກາງ 3,4 ຊັງຕີແມັດ ແລະ ມີເນື້ອໃນດັ່ງນີ້:

- ວົງນອກເບື້ອງເທິງ: ກະຊວງປ້ອງກັນຄວາມສະຫງົບ, ຂັ້ນດ້ວຍຮູບດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ ອົງການຈັດຕັ້ງທີ່ຕົນຂຶ້ນກັບ;
- ໃຈກາງຕາປະທັບ: ຊື່ອົງການຂອງຕົນ.

**ມາດຕາ 10 ຂະໜາດ ແລະ ເນື້ອໃນຕາປະທັບ ຂອງອົງການຈັດຕັ້ງເສດຖະກິດ**

ຕາປະທັບ ຂອງອົງການຈັດຕັ້ງເສດຖະກິດ ມີເສັ້ນຜ່າໃຈກາງ 3,5 ຊັງຕີແມັດ ແລະ ມີເນື້ອໃນ ດັ່ງນີ້:

- ວົງນອກເບື້ອງເທິງ: ຊື່ ອົງການຈັດຕັ້ງລັດ ທີ່ອອກໃບທະບຽນອະນຸຍາດດຳເນີນທຸລະກິດ, ຂັ້ນດ້ວຍຮູບດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ ນະຄອນຫຼວງ, ແຂວງ ທີ່ສຳນັກງານ ຂອງວິສາຫະກິດນັ້ນຕັ້ງຢູ່;
- ໃຈກາງ ຂອງຕາປະທັບ: ຊື່ ວິສາຫະກິດ ຫຼື ສາຂາ ຂອງບໍລິສັດນັ້ນ ຕາມທີ່ລະບຸໄວ້ໃນໃບທະບຽນວິສາຫະກິດ.

**ມາດຕາ 11 ຂະໜາດ ແລະ ເນື້ອໃນຕາປະທັບ ຂອງອົງການຈັດຕັ້ງສັງຄົມ**

ຕາປະທັບ ຂອງອົງການຈັດຕັ້ງສັງຄົມ ມີເສັ້ນຜ່າໃຈກາງ 3,5 ຊັງຕີແມັດ ແລະ ມີເນື້ອໃນ ດັ່ງນີ້:

- ວົງນອກເບື້ອງເທິງ: ຊື່ ອົງການຈັດຕັ້ງ ທີ່ມີສິດອະນຸມັດສ້າງຕັ້ງ ຂັ້ນດ້ວຍຮູບດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ ນະຄອນຫຼວງ, ແຂວງ ທີ່ສຳນັກງານຂອງອົງການຈັດຕັ້ງສັງຄົມນັ້ນຕັ້ງຢູ່;
- ໃຈກາງຕາປະທັບ: ຊື່ ຂອງອົງການຈັດຕັ້ງສັງຄົມນັ້ນ.

**ມາດຕາ 12 ຂະໜາດ ແລະ ເນື້ອໃນຕາປະທັບ ຂອງອົງການຈັດຕັ້ງສາສະໜາ**

ຂະໜາດຕາປະທັບ ຂອງອົງການຈັດຕັ້ງສາສະໜາ ມີເນື້ອໃນ ດັ່ງນີ້:

1. ຕາປະທັບ ຂອງອົງການຈັດຕັ້ງສາສະໜາ ຂັ້ນສູນກາງ ມີເສັ້ນຜ່າໃຈກາງ 3,6 ຊັງຕີແມັດ;
2. ຕາປະທັບຂອງອົງການຈັດຕັ້ງສາສະໜາ ຂັ້ນແຂວງ, ຂັ້ນເມືອງ, ຂັ້ນຕາແສງ, ຄະນະນັກສຶກສາສົງຂັ້ນແຂວງ, ຄະນະອຳນວຍການໂຮງຮຽນປະລິຍັດຕິທຳ, ວິທະຍາໄລສົງ, ອົງການສາສະໜາເຂດ, ໂຮງຮຽນມັດທະຍົມສຶກສາສົງ ແລະ ຄະນະສຶກສາສົງເຂດ ມີເສັ້ນຜ່າໃຈກາງ 3,5 ຊັງຕີແມັດ.

ສຳລັບເນື້ອໃນຕາປະທັບ ຂອງອົງການຈັດຕັ້ງສາສະໜາ ໄດ້ກຳນົດໄວ້ລະບຽບການຕ່າງຫາກ.

## ໝວດທີ 3
## ເງື່ອນໄຂການນຳໃຊ້, ການຂໍອະນຸຍາດຄວັດ, ການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ

**ມາດຕາ 13 ເງື່ອນໄຂການນຳໃຊ້ຕາປະທັບ**

ເງື່ອນໄຂການນຳໃຊ້ຕາປະທັບມີ ດັ່ງນີ້:

1. ອົງການຈັດຕັ້ງ ທີ່ໄດ້ຮັບການສ້າງຕັ້ງ ຢ່າງຖືກຕ້ອງຕາມກົດໝາຍ;
2. ວິສາຫະກິດ ໄດ້ຮັບການຈົດທະບຽນວິສາຫະກິດ ຢ່າງຖືກຕ້ອງຕາມກົດໝາຍ;
3. ຕ້ອງຂຶ້ນທະບຽນຕາປະທັບກ່ອນນຳໃຊ້;
4. ອົງການຈັດຕັ້ງ ທີ່ນຳໃຊ້ຕາປະທັບແຫ້ງ, ຕາປະທັບນ້ອຍ ຕ້ອງແມ່ນອົງການທີ່ມີສິດອອກປະກາສະນີຍະບັດ, ໃບຍັ້ງຢືນ ຫຼື ເອກະສານທີ່ຕິດຮູບ ຕາມກົດໝາຍ ແລະ ລະບຽບການ;
5. ຕ້ອງນຳໃຊ້ຕາປະທັບ ຕາມຮູບແບບທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ການນຳໃຊ້ຕາປະທັບ ກໍລະນີອົງການຈັດຕັ້ງ ຕ້ອງການນຳໃຊ້ຕາປະທັບຫຼາຍໜ່ວຍຄືກັນ ກັບໜ່ວຍທີ່ມີແລ້ວ ໃຫ້ສະເໜີຫາ ຄະນະຈັດຕັ້ງສູນກາງພັກ ເພື່ອຄົ້ນຄວ້າ ແລະ ພິຈາລະນາອະນຸມັດຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 14 (ປັບປຸງ) ການຂໍອະນຸຍາດຄວັດຕາປະທັບ**

ການຂໍອະນຸຍາດຄວັດຕາປະທັບ ມີດັ່ງນີ້:

1. ເອກະສານ ເພື່ອຂໍອະນຸຍາດຄວັດ ແລະ ນຳໃຊ້ຕາປະທັບ ຂອງອົງການຈັດຕັ້ງລັດ ປະກອບມີ ນິຕິກຳ ກ່ຽວກັບການສ້າງຕັ້ງ ແລະ ໜັງສືສະເໜີ ຂອງອົງການທີ່ມີສິດອຳນາດສ້າງຕັ້ງກົງຈັກການຈັດຕັ້ງນັ້ນ;

2. ອົງການຈັດຕັ້ງເສດຖະກິດ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງສາສະໜາ ພາຍຫຼັງໄດ້ຮັບການສ້າງຕັ້ງຢ່າງເປັນທາງການ ສາມາດປະກອບເອກະສານ ຂໍອະນຸຍາດຄວັດຕາປະທັບ ເພື່ອນຳໃຊ້ວຽກງານຂອງຕົນ;

3. ການຂໍອະນຸຍາດຄວັດຕາປະທັບ ເມື່ອປະກອບເອກະສານຖືກຕ້ອງ ແລະ ຄົບຖ້ວນແລ້ວ ໃຫ້ສະເໜີຫາຄະນະຈັດຕັ້ງສູນກາງພັກ ເພື່ອພິຈາລະນາອະນຸມັດຄວັດຕາປະທັບ ຕາມລະບຽບການ. ສຳລັບຕາປະທັບຂອງອົງການຈັດຕັ້ງເສດຖະກິດ ແມ່ນສະເໜີຫາກະຊວງອຸດສາຫະກຳ ແລະ ການຄ້າ; ສະຖານທູດ, ກົງສູນປະຈຳຢູ່ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ທີ່ປະຕິບັດໜ້າທີ່ ຢູ່ ສປປ ລາວ ແມ່ນສະເໜີຫາ ກະຊວງການຕ່າງປະເທດ ຄົ້ນຄວ້າພິຈາລະນາອະນຸມັດຕາມພາລະບົດບາດ. ພາຍຫຼັງໄດ້ຮັບການອະນຸມັດ ຈາກພາກສ່ວນທີ່ກ່ຽວຂ້ອງແລ້ວ ໃຫ້ສະເໜີຫາກະຊວງປ້ອງກັນຄວາມສະຫງົບ ຄວັດ, ຂຶ້ນທະບຽນ ແລະ ອອກໃບອະນຸຍາດນຳໃຊ້ຕາປະທັບ ຢ່າງເປັນທາງການ.

ໃນກໍລະນີຕາປະທັບ ຂອງອົງການຈັດຕັ້ງໃດໜຶ່ງເປ່ເພ, ຫຼູ່ຍຫ້ຽນ ຫຼື ເສຍຫາຍ ໃຫ້ປະກອບເອກະສານອ້າງອີງເຫດຜົນ ຫຼື ບົດລາຍງານ ກ່ຽວກັບສາເຫດທີ່ພາໃຫ້ມີການເປ່ເພ, ຫຼູ່ຍຫ້ຽນ ຫຼື ເສຍຫາຍ ແລ້ວສະເໜີ ຫາກະຊວງປ້ອງກັນຄວາມສະຫງົບ ໂດຍຜ່ານຄະນະຈັດຕັ້ງສູນກາງພັກ ເພື່ອຂໍອະນຸຍາດຄວັດຕາປະທັບໃໝ່ ໂດຍບໍ່ຈຳເປັນປະກອບເອກະສານອື່ນຕື່ມອີກ.

**ມາດຕາ 15 ການຄຸ້ມຄອງຕາປະທັບ**

ການຄຸ້ມຄອງຕາປະທັບ ໃຫ້ປະຕິບັດ ດັ່ງນີ້:

1. ອົງການຈັດຕັ້ງລັດ, ອົງການຈັດຕັ້ງເສດຖະກິດ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາສະໜາ ແລະ ອົງການຈັດຕັ້ງສາກົນ ທີ່ປະຕິບັດໜ້າທີ່ ຢູ່ ສປປ ລາວ ມີສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການຄຸ້ມຄອງ, ກວດກາ, ປົກປັກຮັກສາ ແລະ ນຳໃຊ້ຕາປະທັບ ຂອງອົງການຈັດຕັ້ງຕົນ;

2. ຕາປະທັບ ຕ້ອງເກັບມ້ຽນໃນຫ້ອງການ ບ່ອນທີ່ມີຄວາມປອດໄພ ແລະ ຕ້ອງໄດ້ຮັບການຄຸ້ມຄອງ, ປົກປັກຮັກສາເປັນຢ່າງດີ. ຖ້າມີຄວາມຈຳເປັນ ຕ້ອງການເອົາຕາປະທັບຕິດຕົວໄປນຳ ເພື່ອແກ້ໄຂວຽກງານທີ່ຫ່າງໄກຈາກສຳນັກງານ, ອົງການ ຫົວໜ້າອົງການຈັດຕັ້ງ ຕ້ອງຮັບຜິດຊອບ ຕໍ່ຜົນເສຍຫາຍທັງໝົດ ທີ່ເກີດຂຶ້ນ;

3. ຕາປະທັບ ທີ່ການຈັດຕັ້ງມີການປ່ຽນແປງ ຫຼື ມີການປ່ຽນຊື່ ຕ້ອງປະກອບເອກະສານ ຂໍອະນຸຍາດຄວັດຕາປະທັບຄືນໃໝ່ ແລະ ຕ້ອງສົ່ງຄືນຕາປະທັບໜ່ວຍເກົ່າ ໃຫ້ອົງການທີ່ມີສິດອະນຸມັດຄວັດຕາປະທັບ;

4. ອົງການຈັດຕັ້ງຕ່າງໆ ທີ່ມີການນຳໃຊ້ຕາປະທັບ ຕ້ອງອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນເວລາກວດກາການປະຕິບັດລະບຽບການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ;

5. ອົງການ ຫຼື ສຳນັກງານຜູ້ຕາງໜ້າ ຂອງອົງການຈັດຕັ້ງສາກົນປະຈຳຢູ່ ສປປ ລາວ ນອກຈາກອົງການຈັດຕັ້ງທາງການທູດ ທີ່ຖືຕາປະທັບມານຳ ເພື່ອນຳໃຊ້ ຢູ່ ສປປ ລາວ ກ່ອນນຳໃຊ້ຕາປະທັບ ຂອງຕົນ ຕ້ອງແຈ້ງສຳເນົາຕົວຢ່າງ ຕາປະທັບດັ່ງກ່າວ ໃຫ້ກະຊວງການຕ່າງປະເທດ ລ່ວງໜ້າ ສິບຫ້າວັນລັດຖະການ, ຈາກນັ້ນຈຶ່ງໄປຂຶ້ນທະບຽນ ແລະ ຂໍອະນຸຍາດນຳໃຊ້ຕາປະທັບ ນຳກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 16 ການນຳໃຊ້ຕາປະທັບ**

ການນຳໃຊ້ຕາປະທັບ ໃຫ້ປະຕິບັດ ດັ່ງນີ້:

1. ຮັບປະກັນຄວາມຖືກຕ້ອງ ສອດຄ່ອງ ຕາມແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;

2. ອົງການຈັດຕັ້ງລັດ ແຕ່ລະອົງການ ອະນຸຍາດໃຫ້ມີຕາປະທັບພຽງໜ່ວຍດຽວ; ຖ້າມີຄວາມຈຳເປັນ ແລະ ຕ້ອງການຢາກມີຕາປະທັບໜ່ວຍທີສອງ ທີ່ມີເນື້ອໃນຄືກັນ ຕ້ອງໄດ້ຮັບອະນຸຍາດ ຢ່າງເປັນລາຍລັກອັກສອນ ຈາກຄະນະຈັດຕັ້ງສູນກາງພັກ ແລະ ຕ້ອງມີເຄື່ອງໝາຍສະເພາະ ເພື່ອຈຳແນກກັບຕາປະທັບ ໜ່ວຍກ່ອນທີ່ມີຢູ່ແລ້ວ;

3. ອົງການຈັດຕັ້ງ ທີ່ເຮັດໜ້າທີ່ອອກໃບປະກາສະນີຍະບັດ, ບັດປະຈຳຕົວ, ອອກວິຊາ ທີ່ມີການຕິດຮູບ ອະນຸຍາດ ໃຫ້ມີຕາປະທັບຕື່ມອີກ ເປັນປະເພດຕາແຫ້ງ ຫຼື ຕາຂະໜາດນ້ອຍກວ່າໜ່ວຍເກົ່າ ແຕ່ຕ້ອງໄດ້ຮັບອະນຸຍາດ ຢ່າງເປັນລາຍລັກອັກສອນຈາກ ຈາກຄະນະຈັດຕັ້ງສູນກາງພັກ ແລະ ເນື້ອໃນ ກໍຕ້ອງຄືກັນກັບຕາປະທັບໜ່ວຍທີ່ມີຢູ່ແລ້ວນັ້ນ;

4. ການຈ້ຳຕາປະທັບ ໃສ່ເອກະສານຕ່າງໆ ຕ້ອງປະຕິບັດຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ. ໃນການຈ້ຳຕາປະທັບລົງໃສ່ເອກະສານ ຕ້ອງຮັບປະກັນໃຫ້ຈະແຈ້ງ, ໃຫ້ກວມເອົາ ໜຶ່ງສ່ວນສາມ ຂອງລາຍເຊັນ, ອ່ຽງມາທາງຊ້າຍມື ແລະ ຈ້ຳຕາປະທັບເມື່ອມີລາຍເຊັນແລ້ວ;

5. ສະຖານທູດ, ສະຖານກົງສູນ, ສຳນັກງານຜູ້ຕາງໜ້າ ຂອງອົງການຈັດຕັ້ງສາກົນປະຈຳ ຢູ່ ສປປ ລາວ ກ່ອນຈະນຳໃຊ້ຕາປະທັບຂອງຕົນ ຕ້ອງແຈ້ງສຳເນົາຕົວຢ່າງຕາປະທັບດັ່ງກ່າວ ໃຫ້ກະຊວງການຕ່າງປະເທດ ລ່ວງໜ້າ ແລ້ວຈຶ່ງໄປຂຶ້ນທະບຽນນຳໃຊ້ຕາປະທັບ ຢູ່ທີ່ກະຊວງປ້ອງກັນຄວາມສະຫງົບ;

6. ອົງການຈັດຕັ້ງທີ່ສັງກັດ ຫຼື ບໍ່ສັງກັດລັດຖະບານ ຂອງຕ່າງປະເທດ ມີຄວາມຕ້ອງການຢາກເອົາຕາປະທັບຂອງຕົນ ເຂົ້າມານຳໃຊ້ ຢູ່ ສປປ ລາວ ກ່ອນຈະນຳໃຊ້ຕາປະທັບ ຕ້ອງໄດ້ຂຶ້ນທະບຽນພ້ອມທັງສຳເນົາຮູບແບບຕາປະທັບນຳກະຊວງປ້ອງກັນຄວາມສະຫງົບ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 17 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຄວັດ ແລະ ອອກໃບອະນຸຍາດນຳໃຊ້ຕາປະທັບ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
2. ຄວັດ ຫຼື ນຳໃຊ້ຕາປະທັບປອມ;
3. ຊື້, ຂາຍ, ແລກປ່ຽນ ແລະ ທຳລາຍຕາປະທັບ;
4. ເປັນສື່ກາງ, ໃຫ້ສິນບົນແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 18 ຂໍ້ຫ້າມສຳລັບຜູ້ນຳໃຊ້ຕາປະທັບ**

ຫ້າມ ຜູ້ນຳໃຊ້ຕາປະທັບ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້, ຈ້ຳ ຕາປະທັບ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ປ່ຽນແປງຂະໜາດ, ຮູບແບບ ແລະ ເນື້ອໃນຕາປະທັບ;

3. ນຳໃຊ້ຕາປະທັບທີ່ອົງການຈັດຕັ້ງທີ່ກ່ຽວຂ້ອງແຈ້ງໃຫ້ສົ່ງຄືນ;
4. ຢືມ, ໃຫ້ຢືມ, ເຊົ່າ, ໃຫ້ເຊົ່າ, ຈຳນຳ, ຄ້ຳປະກັນຕາປະທັບ;
5. ຄອບຄອງຕາປະທັບ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
6. ນຳໃຊ້ຕາປະທັບ ທີ່ບໍ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
7. ປອມແປງ ຫຼື ປ່ຽນແປງ ເນື້ອໃນໃບອະນຸຍາດນຳໃຊ້ຕາປະທັບ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 19 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ຕຳແໜ່ງ, ໜ້າທີ່, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ໃຫ້ ຫຼື ຮັບສິນບົນ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດ ຂອງລັດ, ລວມໝູ່ ແລະ ບຸກຄົນ;

2. ເປີດເຜີຍ ຄວາມລັບຂອງລັດ ຫຼື ທາງລັດຖະການ, ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານ, ຂາດຄວາມຮັບຜິດຊອບ ຕໍ່ໜ້າທີ່ວຽກງານຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ທີ່ໄດ້ຮັບມອບໝາຍ;

3. ປົກປ້ອງ, ສົມຮູ້ຮ່ວມຄິດ ກັບຜູ້ດຳເນີນທຸລະກິດຜະລິດຕາປະທັບ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 5
## ການຄຸ້ມຄອງວຽກງານຕາປະທັບ

**ມາດຕາ 20 (ປັບປຸງ) ອົງການຄຸ້ມຄອງວຽກງານຕາປະທັບ**

ອົງການຄຸ້ມຄອງວຽກງານຕາປະທັບ ປະກອບດ້ວຍ:
1. ຄະນະຈັດຕັ້ງສູນກາງພັກ;
2. ກະຊວງປ້ອງກັນຄວາມສະຫງົບ;
3. ກະຊວງອຸດສາຫະກຳ ແລະ ການຄ້າ;
4. ກະຊວງການຕ່າງປະເທດ;
5. ອົງການປົກຄອງທ້ອງຖິ່ນ.

**ມາດຕາ 21 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະຈັດຕັ້ງສູນກາງພັກ**

ຄະນະຈັດຕັ້ງສູນກາງພັກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຮ່າງນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ອອກໃບອະນຸມັດຄວັດຕາປະທັບ, ຕິດຕາມ ແລະ ກວດກາ ອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາສະໜາ ທັງພາຍໃນ ແລະ ຕ່າງປະເທດ ໃນການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ;

3. ຄົ້ນຄວ້າປະກອບຄຳເຫັນ ຕໍ່ການສະເໜີຂອງອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາສະໜາ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການນຳໃຊ້ຕາປະທັບ;

4. ເກັບຄືນຕາປະທັບຂອງອົງການຈັດຕັ້ງຕ່າງໆ ທີ່ຖືກຍຸບເລີກ, ປ່ຽນແປງ, ເປ່ເພ ຫຼື ຫຼຸ້ຍຫ້ຽນ;
5. ຈັດກອງປະຊຸມສະຫຼຸບ, ຖອດຖອນບົດຮຽນວຽກງານຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ປະຈຳປີ;
6. ລາຍງານວຽກງານຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ໃຫ້ຂັ້ນເທິງຊາບ ໃນແຕ່ລະໄລຍະ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 22 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄວັດ ຫຼື ຜະລິດ, ຂຶ້ນທະບຽນຕາປະທັບ ແລະ ອອກໃບອະນຸຍາດນຳໃຊ້ຕາປະທັບ ຂອງແຕ່ລະອົງການຈັດຕັ້ງ;

2. ອອກໃບອະນຸມັດຄວັດຕາປະທັບ ໃນຂົງເຂດກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງປ້ອງກັນປະເທດ ພ້ອມທັງເປັນເຈົ້າການໃນການຕິດຕາມ, ກວດກາ ອົງການຈັດຕັ້ງຂອງລັດ, ເອກະຊົນ ໃນຂອບເຂດທົ່ວປະເທດ ໃນການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ;

3. ຕິດຕາມ ກວດກາການຈັດຕັ້ງ ທີ່ມີການປ່ຽນແປງ ຫຼື ປ່ຽນຊື່, ຍຸບເລີກ, ແຍກອອກຈາກກັນ, ໂຮມເຂົ້າກັນຂອງອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງເສດຖະກິດ ເພື່ອຖອນຄືນຕາປະທັບ ແລະ ອອກໃບຢັ້ງຢືນໃຫ້ແກ່ອົງການຈັດຕັ້ງດັ່ງກ່າວ ທີ່ມີການປ່ຽນແປງຕ່າງໆ ພ້ອມທັງທຳລາຍຕາປະທັບໜ່ວຍເກົ່າ;

4. ສຶກສາອົບຮົມ, ກ່າວເຕືອນ, ປັບໃໝຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕາປະທັບ;

5. ລາຍງານ ວຽກງານຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນຕໍ່ຄະນະຈັດຕັ້ງສູນກາງພັກຊາບ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 23 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ອອກໃບທະບຽນວິສາຫະກິດ ແລະ ແນະນຳໃຫ້ນັກລົງທຶນ ນຳໃບທະບຽນວິສາຫະກິດດັ່ງກ່າວ ເພື່ອແຈ້ງຂໍອະນຸຍາດຄວັດຕາປະທັບວິສາຫະກິດຂອງຕົນ ນຳຂະແໜງປ້ອງກັນຄວາມສະຫງົບ;

2. ອອກໃບອະນຸມັດຄວັດຕາປະທັບ ໃນຂົງເຂດກະຊວງອຸດສາຫະກຳ ແລະ ການຄ້າ ແລະ ເປັນເຈົ້າການໃນການຕິດຕາມ, ກວດກາການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ຂອງການຈັດຕັ້ງ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ລາຍງານວຽກງານຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ຄະນະຈັດຕັ້ງສູນກາງພັກຊາບ ຢ່າງເປັນປົກກະຕິ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 24 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ**

ກະຊວງການຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າອະນຸມັດໃຫ້ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງ ທີ່ບໍ່ສັງກັດລັດຖະບານ ຂອງຕ່າງປະເທດ ທີ່ເຄື່ອນໄຫວ ຢູ່ ສປປ ລາວ ມີຕາປະທັບ ເພື່ອນຳໃຊ້ໃນການພົວພັນວຽກງານ ທາງລັດຖະການ;

2. ເປັນເຈົ້າການໃນການຕິດຕາມ, ກວດກາການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ຂອງການຈັດຕັ້ງທີ່ຢູ່ພາຍໃນຂອບເຂດຄວາມຮັບຜິດຊອບ ຂອງຕົນ;

3. ລາຍງານວຽກງານຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ຄະນະຈັດຕັ້ງສູນກາງພັກຊາບ ຢ່າງເປັນປົກກະຕິ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 25** (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ

ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ ດັ່ງນີ້:

1. ໂຄສະນາ ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ;

2. ພິຈາລະນາເອກະສານ ການຄວັດຕາປະທັບ ຂອງຕາແສງ, ເມືອງ, ນະຄອນ, ນະຄອນຫຼວງ, ແຂວງ ກ່ອນຈະສະເໜີຂໍອະນຸຍາດຄວັດຕາປະທັບ ນຳຄະນະຈັດຕັ້ງສູນກາງພັກ;

3. ລາຍງານວຽກງານຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ຄະນະຈັດຕັ້ງສູນກາງພັກຊາບ ຢ່າງເປັນປົກກະຕິ;

4. ຕິດຕາມ, ກວດກາ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ຂອງອົງການຈັດຕັ້ງ ຢູ່ໃນຂັ້ນທ້ອງຖິ່ນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6

## ການກວດກາ

**ມາດຕາ 26 ອົງການກວດກາວຽກງານຕາປະທັບ**

ອົງການກວດກາວຽກງານຕາປະທັບ ປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນ ອົງການດຽວກັນ ກັບອົງການຄຸ້ມຄອງວຽກງານຕາປະທັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຂອງດຳລັດສະບັບນີ້;

2. ອົງການກວດກາພາຍນອກ ແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ ແລະ ອົງການກວດກາ ແຫ່ງລັດ.

**ມາດຕາ 27 ເນື້ອໃນການກວດກາ**

ເນື້ອໃນການກວດກາ ມີ ດັ່ງນີ້:

1. ການຈັດຕັ້ງປະຕິບັດດຳລັດ ສະບັບນີ້ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;
2. ການອອກນິຕິກຳ ຂອງອົງການຄຸ້ມຄອງວຽກງານຕາປະທັບ ແລະ ອະນຸມັດຕາປະທັບ;
3. ຄວາມຮັບຜິດຊອບ ຂອງພະນັກງານທີ່ຮັບຜິດຊອບວຽກງານຕາປະທັບ.

**ມາດຕາ 28 ຮູບການການກວດກາ**

ການກວດກາວຽກງານຕາປະທັບ ມີສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

**ຮູບການການກວດກາມີເນື້ອໃນ ດັ່ງນີ້:**

ການກວດກາຕາມປົກກະຕິ ແມ່ນການກວດກາ ຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາແນ່ນອນ;

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດກາ ນອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາ ຊາບລ່ວງໜ້າ;

ການກວດກາແບບກະທັນຫັນ ແມ່ນການກວດກາ ເມື່ອມີຄວາມຈຳເປັນ, ຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 29** ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດ ສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 30** ມາດຕາການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 31** (ປັບປຸງ) ການຈັດຕັ້ງປະຕິບັດ

ຄະນະຈັດຕັ້ງສູນກາງພັກ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການຕ່າງປະເທດ ເປັນເຈົ້າການປະສານສົມທົບຊຶ່ງກັນ ແລະ ກັນ, ປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງອື່ນ ທີ່ນຳໃຊ້ຕາປະທັບ ຕາມດຳລັດສະບັບນີ້ ຕ້ອງຮັບຮູ້ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 32** ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດວ່າດ້ວຍຕາປະທັບ ສະບັບເລກທີ 322/ລບ, ລົງວັນທີ 01 ຕຸລາ 2018.

ຕາງໜ້າລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ